DISCOVER
VIENTIANE COLLEGE




## The Discover English Program

ຫຼັກສູດ Discover English Program ແມ່ນຫຼັກສູດການຮຽນ 3 ລະດັບ ສຳລັບນັກຮຽນທີ່ມີອາຍຸຕັ້ງແຕ່ 7 ປີ ຂຶ້ນໄປ. ຫຼັກສູດດັ່ງກ່າວແມ່ນເນັ້ນໜັກການນຳໃຊ້ພາສາອັງກິດເຂົ້າໃນການສື່ສານຢ່າງມີປະສິດທິພາບ ແລະ ສ້າງແນວຄວາມຄິດເພື່ອກ້າວໄປສູ່ການຮຽນຮູ້ທີ່ປະສົບຜົນສຳເລັດ.

ພວກເຮົາຈະຊ່ວຍເສີມສ້າງທັກສະພາສາອັງກິດຂັ້ນພື້ນຖານຄື: ການອ່ານ, ການຂຽນ, ການຟັງ ແລະ ການເວົ້າ ໃຫ້ແກ່ລູກຫຼານຂອງທ່ານ. ຫຼັກສູດດັ່ງກ່າວນີ້ແມ່ນມີຄວາມຫຼາກຫຼາຍ ເພື່ອໃຫ້ນັກຮຽນມີການຄົ້ນຄິດແບບສ້າງສັນ ແລະ ການຄົ້ນຄິດແບບວິເຄາະ.

ນັກຮຽນຈະໄດ້ຮັບການຝຶກທັກສະພາສາອັງກິດຜ່ານກິດຈະກຳແບບຮ່ວມໝູ່ (ກິດຈະກຳເຮັດວຽກແບບເປັນກຸ່ມ) ແລະ ການປະຕິບັດຕົວຈິງ.

ສຳລັບຫ້ອງລະດັບເລີ່ມຕົ້ນ ພວກເຮົາຈະເນັ້ນໜັກໃນການອອກສຽງ "ໂຟນິກ" (ແມ່ນການອອກສຽງພະຍັນຊະນະ ໃຊ້ເປັນແນວທາງໃນການສະກົດຄຳສັບພາສາອັງກິດ). ນອກນັ້ນ ພວກເຮົາໄດ້ນຳໃຊ້ຫຼັກສູດ Oxford Phonics World program ເພື່ອສ້າງທັກສະໃນການອ່ານພາສາອັງກິດ ແລະ ຝຶກແອບວິທີການອອກສຽງ.

ພວກເຮົາຍັງໄດ້ນຳໃຊ້ປຶ້ມອ່ານຈາກ Oxford Reading Tree ຊຶ່ງແມ່ນຫຼັກສູດໂຄງສ້າງສຳລັບການອ່ານທີ່ເປັນທີ່ນິຍົມໃນບັນດາໂຮງຮຽນຢູ່ປະເທດອັງກິດ ແລະ ໃນທົ່ວໂລກ. ພວກເຮົາຍັງຈະໄດ້ນຳໃຊ້ປຶ້ມນິທານ, ສາລະຄະດີເຂົ້າໃນການສົ່ງເສີມທັກສະພາສາອັງກິດ ແລະ ຄວາມຮູ້ອ້ອມຕົວຂອງນັກຮຽນ.

## ການຊ່ວຍເຫຼືອການຮຽນຮູ້ແກ່ລູກຫຼານຂອງທ່ານ

ວິທີທີ່ດີທີ່ສຸດ ທີ່ສາມາດຊ່ວຍລູກຫຼານຂອງທ່ານຮຽນໃນຂະນະທີ່ມາຮຽນນຳພວກເຮົາ ປະກອບມີ:



- ຕ້ອງໃຫ້ລູກຫຼານຂອງທ່ານມາໂຮງຮຽນ ຢ່າງເປັນປະຈຳ. ໃນກໍລະນີລູກຫຼານຂອງທ່ານບໍ່ສາມາດມາຮຽນໄດ້ ທ່ານສາມາດໂທແຈ້ງໂຮງຮຽນ;
- ຕ້ອງກວດກາວ່າລູກຫຼານຂອງທ່ານໄດ້ນຳເອົາອຸປະກອນການຮຽນມາໂຮງຮຽນໃຫ້ຄົບຖ້ວນໃນແຕ່ລະຄັ້ງ. ອາຈານຈະຂຽນລາຍການອຸປະກອນການຮຽນທີ່ຈະນຳໃຊ້ແກ່ນັກຮຽນໃນແຕ່ລະຄັ້ງ.

ທ່ານຍັງສາມາດ ຊ່ວຍລູກຫຼານຂອງທ່ານຮຽນຮູ້ນອກຫ້ອງຮຽນໄດ້ອີກຄື:



- ສອບຖາມລູກຫຼານຂອງທ່ານ ກ່ຽວກັບສິ່ງທີ່ໄດ້ຮຽນຜ່ານມາ.
- ຝຶກແອບການນຳໃຊ້ພາສາອັງກິດທີ່ໄດ້ຮຽນມາ.
- ຊ່ວຍລູກຫຼານຂອງທ່ານຮຽນຮູ້ພາສາອັງກິດຈາກສິ່ງຕ່າງໆທີ່ຢູ່ອ້ອມຕົວຂອງເຂົາເຈົ້າ.

ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບຫຼັກສູດ, ພ້ອມທັງວິທີການທີ່ຈະຊ່ວຍໃຫ້ລູກຫຼານຂອງທ່ານໄດ້ຮັບປະສົບການດີໆໃນການຮຽນຮູ້. ທ່ານສາມາດເຂົ້າມາຮ່ວມຮັບຟັງບັນຍາຍ ແລະ ຢ້ຽມຊົມໂຮງຮຽນໃນໄລຍະເປີດພາກຮຽນ. ທ່ານສາມາດຕິດຕໍ່ໂຮງຮຽນໂດຍກົງ ເພື່ອຂໍນັດປຶກສາກ່ຽວກັບການຮຽນຂອງລູກຫຼານຂອງທ່ານ.